**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ສູນສະຖິຕິແຫ່ງຊາດ

ໂຄງການສ້າງຄວາມອາດສ້າງມາດລະບົບສະຖິຕິແຫ່ງຊາດ ເລກທີ 1205 /ສຖຕ.ຄສລ

ນະຄອນຫຼວງວຽງຈັນ, ວັນທີ 02 ກັນຍາ 2026.

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

**ເຖິງ:** ຫ້າງຮ້ານ, ວິສາຫະກິດທຸກພາກສ່ວນທີ່ກ່ຽວຂ້ອງ.

1. ສູນສະຖິຕິແຫ່ງຊາດ, ກະຊວງການເງິນ ໄດ້ຮັບເງິນກູ້ຢືມຈາກສະມາຄົມພັດທະນາສາກົນ (IDA), ທະນາໂລກ ເພື່ອດຳເນີນການປະມູນ ຈັດຊື້ອຸປະກອນ ແລະ ເຄື່ອງມືສຳລັບຮັບໃຊ້ການສຳຫຼວດແຮງງານ ປະຈຳປີ 2026-2027 ຂອງ ສູນສະຖິຕິແຫ່ງຊາດ ພາຍໃຕ້ໂຄງການສ້າງຄວາມອາດສາມາດລະບົບສະຖິຕິແຫ່ງຊາດ ໄລຍະ II (LAOSTAT-II) ດ້ວຍການປະມູນແບບສົມທຽບລາຄາ.

2. ສູນສະຖິຕິແຫ່ງຊາດ, ກະຊວງການເງິນ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາສຳລັບການຈັດຊື້ອຸປະກອນ ແລະ ເຄື່ອງມືສຳລັບຮັບໃຊ້ການສຳຫຼວດແຮງງານ ປະຈຳປີ 2026-2027 ຂອງ ສູນສະຖິຕິແຫ່ງຊາດ ພາຍໃຕ້ໂຄງການສ້າງຄວາມອາດສາມາດລະບົບສະຖິຕິແຫ່ງຊາດ ໄລຍະ II (LAOSTAT-II). ໄລຍະເວລາໃນການສົ່ງມອບ ຫລື ການບໍລິການ ແມ່ນ 15 – 45 ວັນ ພາຍຫຼັງເຊັນສັນຍາ.

3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

4. ບໍລິສັດ ຫຼື ຫ້າງຮ້ານສົນໃຈເຊີນຕິດຕໍ່ເອົາຊອງປະມູນ ນັບແຕ່ວັນທີ 03 – 17 **ກັນຍາ 2026** ແລະ ຊອງປະມູນທຸກໆຊອງຈະເປີດຂາຍໃນລາຄາ 500,000 ກີບ/ຊອງ ຕາມໂມງລັດຖະການ ທີ່ຫ້ອງ 209, ຊັ້ນ 02, ສູນສະຖິຕິແຫ່ງຊາດ, ກະຊວງການເງິນ, ບ້ານ ດົງນາໂຊກເໜືອ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ

   ຕິດຕໍ່ພົວພັນ: 020 28166371

   Email : littana.lsb2023@gmail.com; chilapha77@gmail.com

5. ຊອງປະມູນຕ້ອງສົ່ງກ່ອນ ເວລາ **2:15** ໂມງ ຂອງ 17 **ກັນຍາ 2026** ທີ່ ຫ້ອງປະຊຸມ ຊັ້ນ 3 ເບີ 311, ສູນສະຖິຕິແຫ່ງຊາດກະຊວງການເງິນ. ສະຖານທີ່ຕັ້ງຢູ່ ບ້ານ ດົງນາໂຊກເໜືອ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ ແລະ ຊອງປະມູນສົມທຽບລາຄາທຸກໆຊອງຈະເປີດໃນເວລາ 02:30 ໂມງ ຂອງມື້ດຽວກັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຜູ້ທີ່ຍື່ນຊອງຕາງໜ້າບໍລິສັດທີ່ສົນໃຈຢາກເຂົ້າຮ່ວມ.

**ຮອງລັດຖະມົນຕີ ກະຊວງການເງິນ,**

**ຫົວໜ້າສູນສະຖິຕິແຫ່ງຊາດ,**

**ຫົວໜ້າໂຄງການ**

ສູນສະຖິຕິແຫ່ງຊາດ ກະຊວງການເງິນ

**ເພັດສະໝອນ ສອນ**